# ຕະຫຼາດວັດທະນະທຳ ແລະ ທ່ອງທ່ຽວແຂວງຫູໜານ ມີຄວາມຄຶກຄື້ນໃນໄລຍະບຸນກຸດຈີນປີມະໂລງນີ້

ເວທີຈັດງານລາຕີສະຫຼອງບຸນກຸດຈີນ ທີ່ນະຄອນສາງຊາ (Changsha) ບໍ່ພຽງແຕ່ໄດ້ດຶງດູດສາຍຕາຂອງຊາວຈີນໃນທົ່ວໂລກ ໃນມື້ສິ່ງທ້າຍປີເກົ່າເທົ່ານັ້ນ, ນັບແຕ່ເປີດໃຫ້ຄົນເຂົ້າຊົມໃນມື້ຂຶ້ນ 3 ຄ່ຳເດືອນຈຽງເປັນຕົ້ນມາ, ໄດ້ດຶງດູດຊາວເມືອງ ແລະ ນັກທ່ອງທ່ຽວ 41.156 ເທື່ອຄົນເຂົ້າຢ້ຽມຊົມ.

ຫໍພິພິທະພັນແຂວງຫູໜານ ໄດ້ເປີດເຜີຍວ່າ "ການນັດເຂົ້າຢ້ຽມຊົມເຕັມ" ເປັນຫຼາຍມື້, ສະລິງແຫຼ່ງທ່ອງທ່ຽວທຽນເໝີນຊານ (Tianmen Mountain) ກໍຊື້ຍາກທີ່ສຸດ... ແຫຼ່ງທ່ອງທ່ຽວຫຼາຍແຫ່ງ ມີນັກທ່ອງທ່ຽວເຂົ້າໄປທ່ຽວເປັນຈຳນວນຫຼວງຫຼາຍ.

ໃນລະດູບານໃໝ່ປີມະໂລງ, ແຫຼ່ງທ່ອງທ່ຽວຕ່າງໆຂອງແຂວງຫູໜານ ໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວເປັນພິເສດ.



ສະເຫຼີມສະຫຼອງມື້ບຸນປະເພນີດ້ວຍບັ້ງໄຟດອກທີ່ງາມສະຫງ່າຕອນຄ່ຳວັນທີ 12 ກຸມພານີ້, ແຫຼ່ງທ່ອງທ່ຽວ Colorful world ນະຄອນສາງຊາ ໄດ້ຈັດກິດຈະກຳບັ້ງໄຟດອກສະຫຼອງບຸນກຸດຈີນ. ບັ້ງໄຟດອກປະເພດຕ່າງໆໄດ້ທະຍານຂຶ້ນສູ່ທ້ອງຟ້າ, ໄດ້ປະດັບທ້ອງຟ້າຂອງແຫຼ່ງທ່ອງທ່ຽວທີ່ງາມສະຫງ່າເປັນພິເສດ. ພາບໂດຍ: Xu Xing ນັກຂ່າວໜັງສືພິມລາຍວັນຫູໜານ, Deng Ting ຜູ້ສື່ຂ່າວ



ຕອນຄ່ຳວັນທີ 17 ກຸມພານີ້, ຊາວເມືອງ ແລະ ນັກທ່ອງທ່ຽວ ໄດ້ເຂົ້າຢ້ຽມຊົມເວທີຈັດງານລາຕີສະຫຼອງບຸນກຸດຈີນ ທີ່ນະຄອນສາງຊາທີ່ຕັ້ງຢູ່ສວນວັດທະນະທຳປິ່ນຈ່ຽງ (Binjiang) ນະຄອນສາງຊາ.
ພາບໂດຍ: Gu Pengbo ນັກຂ່າວໜັງສືພິມລາຍວັນຫູໜານ



ມີນັກທ່ອງທ່ຽວໄປທ່ຽວແຫຼ່ງທ່ອງທ່ຽວ ໃນໄລຍະບຸນກຸດຈີນຢ່າງຫຼວງຫຼາຍ. ວັນທີ 12 ກຸມພານີ້, ນັກທ່ອງທ່ຽວໄປທ່ຽວແຫຼ່ງທ່ອງທ່ຽວທຽນເໝີນຊານ ນະຄອນຈ່າງເຈຍເຈ້ ເປັນຈຳນວນຫຼວງຫຼາຍ. ໃນຫຼາຍມື້ມໍ່ໆມານີ້, ອາກາດປອດໂປ່ງສົດໃສ, ຊາວເມືອງ ແລະ ນັກທ່ອງທ່ຽວ ໄດ້ໄປທ່ຽວແຫຼ່ງທ່ອງທ່ຽວແຫ່ງຕ່າງໆຫຼາຍຂຶ້ນ, ຊາວເມືອງ ແລະ ນັກທ່ອງທ່ຽວໄປພັກຜ່ອນຢ່ອນໃຈຢູ່ແຫຼ່ງທ່ອງທ່ຽວໃນໄລຍະພັກບຸນກຸດຈີນ.
ພາບໂດຍ: Peng Liping

## ບັນຍາກາດສະຫຼອງບຸນກຸດຈີນຕາມຮີດຄອງປະເພນີທີ່ເຂັ້ມຂຸ້ນ



ວັນທີ 12 ກຸມພານີ້, ນັກທ່ອງທ່ຽວ ໄດ້ຊົມການສະແດງເຊີດມັງກອນຢູ່ແຫຼ່ງທ່ອງທ່ຽວທຽນເໝີນຊານນະຄອນຈ່າງເຈ່ຍເຈ້ (Zhangjiajie). ພາບໂດຍ: Wu Guangming

"ການສະໜອງບຸນກຸດຈີນ ຕາມຮີດຄອງປະເພນີຢູ່ແຂວງຫູໜານ". ໃນໄລຍະບຸນກຸດຈີນປີນີ້, ກິດຈະກຳສະຫຼອງມື້ບຸນຕາມຮີດຄອງປະເພນີ 1.000 ກວ່າລາຍການ ເຊັ່ນ: ບຸນວັດລະດູບານໃໝ່, ງານໂຄມໄຟບຸນເຂົ້າໜົມບົວລອຍ, ເຊີດສິງໂຕ, ເຊີດມັງກອນ, ການສະແດງຮີດຄອງເກົ່າ, ການສະຫຼອງບຸນປີໃໝ່ເຜົ່າຖູເຈ່ຍ (Tujia), ການສະຫຼອງບຸນປີໃໝ່ເຜົ່າມົ້ງ ແລະ ອື່ນໆ ໄດ້ດຳເນີນຢູ່ທ້ອງຖິ່ນຕ່າງໆຂອງແຂວງຫູໜານ.

ເວທີຈັດງານລາຕີສະຫຼອງບຸນກຸດຈີນ ທີ່ນະຄອນສາງຊາ ໄດ້ຮັບຄວາມນິຍົມຊົມຊອບຈາກຄົນທັງຫຼາຍ, ປີ້ເຂົ້າຊົມທີ່ສັ່ງຈອງທາງອິນເຕີເນັດ ຖືກຈອງໝົດພາຍໃນບໍ່ເທົ່າໃດນາທີຂອງທຸກມື້, ຫົວຂໍ້ຕ່າງໆທີ່ກ່ຽວຂ້ອງກັບເວທີດັ່ງກ່າວ ກໍໄດ້ກາຍເປັນປະເດັນຮ້ອນທາງອິນເຕີເນັດ.

## ຕະຫຼາດວັດທະນະທຳ ແລະ ທ່ອງທ່ຽວຍິ່ງຄຶກຄື້ນກວ່າ



ເຊີດສິງໂຕ ແລະ ເຊີດມັງກອນ ເພື່ອສະຫຼອງບຸນກຸດຈີນ. ຕອນຄ່ຳວັນທີ 19 ກຸມພານີ້, ທີມສະແດງທີ່ເຂົ້າຮ່ວມການແຂ່ງຂັນ ໄດ້ເຊີດສິງໂຕ ແລະ ເຊີດມັງກອນ ແບບດັ້ງເດີມ ຢູ່ສວນສາທາລະນະປາກເປັດມາລານຊານ (Malanshan) ນະຄອນສາງຊາ. ພາບໂດຍ: Tiao Chao ນັກຂ່າວໜັງສືພິມລາຍວັນຫູໜານ

ໂຕເລກຂໍ້ມູນຈາກພະແນກວັດທະນະທຳ ແລະ ທ່ອງທ່ຽວແຂວງຫູໜານສະແດງໃຫ້ເຫັນວ່າ: ນັບແຕ່ວັນທີ 10 ຫາ 17 ກຸມພານີ້, ທົ່ວແຂວງຫູໜານໄດ້ຕ້ອນຮັບນັກທ່ອງທ່ຽວ 36,86 ລ້ານເທື່ອຄົນ, ເພີ່ມຂຶ້ນ 31,5% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ; ໃນນັ້ນ, ນັກທ່ອງທ່ຽວຕ່າງແຂວງມີເຖິງປະມານ 12,45 ລ້ານເທື່ອຄົນ, ກວມ 33,77%; ນັກທ່ອງທ່ຽວຄ້າງຄືນ ສະເລ່ຍ ໄດ້ພັກ 2,87 ວັນ.

"ບົດລາຍງານຕະຫຼາດທ່ອງທ່ຽວບຸນກຸດຈີນ 2024" ທີ່ກຸ່ມບໍລິສັດ Trip.com ເປີດເຜີຍສະແດງໃຫ້ເຫັນວ່າ: ໃນໄລຍະພັກບຸນກຸດຈີນປີນີ້, ໃບສັ່ງຈອງໃນທົ່ວແຂວງຫູໜານ ຂອງກຸ່ມບໍລິສັດ Trip.com ໄດ້ເພີ່ມຂຶ້ນ 875% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ, ໃບສັ່ງຈອງຢູ່ນະຄອນສາງຊາ ເຂດສະບານແຂວງຫູໜານ ໄດ້ເພີ່ມຂຶ້ນ 10 ເທົ່າ ແລະ ໃບສັ່ງຈອງຣີສອດທົ່ວແຂວງ ໄດ້ເພີ່ມຂຶ້ນເກືອບ 590% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ.

## ສະຫຼອງປີມະໂລງດ້ວຍວັດທະນະທຳມະໂລງທີ່ເຂັ້ມຂຸ້ນ



ຕອນຄ່ຳວັນທີ 23 ກຸມພານີ້, ຕາແສງມາຈິງເອີາ ນະຄອນຈີໂສ (Jishou) ແຂວງຫູໜານ ໄດ້ຈັດການສະແດງຮີດຄອງປະເພນີໄຟເຫຼັກກ້າເຜົາມັງກອນ ເພື່ອສະເຫຼີມສະຫຼອງບຸນເຂົ້າໜົມບົວລອຍ ຢ່າງຟົດຟື້ນຄຶກຄື້ນ, ຂໍອະທິຖານໃຫ້ປີໃໝ່ມີຟ້າຝົນລົມດີ ແລະ ມີຜົນເກັບກ່ຽວທີ່ດີ. ພາບໂດຍ: Yao Fang, Zhang Diping

ໃນໄລຍະພັກບຸນກຸດຈີນປີມະໂລງ, ທ້ອງຖິ່ນຕ່າງໆຂອງແຂວງຫູໜານ ໄດ້ຊຸກຍູ້ການເຊື່ອມໂຍງເຂົ້າກັນ ລະຫວ່າງ ວັດທະນະທຳ ແລະ ທ່ອງທ່ຽວ ໂດຍປະສານສົມທົບກັບມູນເຊື້ອວັດທະນະທຳ, ໄດ້ຍົກ "ປັດໄຈມະໂລງ" ເຂົ້າໃນຜະລິດຕະພັນວັດທະນະທຳ ແລະ ທ່ອງທ່ຽວ ເພື່ອຊຸກຍູ້ການພັດທະນາຂະແໜງການວັດທະນະທຳ ແລະ ທ່ອງທ່ຽວ ດ້ວຍວັດທະນະທຳທີ່ເຂັ້ມຂຸ້ນ.

ການວາງສະແດງຕາມຫົວຂໍ້ສະເພາະ 156 ລາຍການ ໄດ້ດຶງດູດຄົນທັງຫຼາຍ ເຂົ້າຢ້ຽມຊົມຫໍພິພິທະພັນ ໃນໄລຍະບຸນກຸດຈີນ. ປີນີ້, ຫໍພິພິທະພັນແຂວງຫູໜານ ໄດ້ຈັດງານວາງສະແດງໃຫຍ່ 7 ຫົວຂໍ້ໃຫຍ່, ໄດ້ເພີ່ມໂກຕາເຂົ້າຊົມ 5.000 ຄົນຕໍ່ມື້. ຫໍພິພິທະພັນ 30 ແຫ່ງ ໃນທົ່ວແຂວງຫູໜານເຊັ່ນ: ຫໍພິພິທະພັນນະຄອນສາງຊາ, ຫໍພິພິທະພັນນະຄອນຈູໂຈ່ວ (Zhuzhou) ແລະ ຫໍພິພິທະພັນສາງເຕີ (Changde) ເປັນຕົ້ນໄດ້ຈັດ "ງານວາງສະແດງວັດຖຸບູຮານລາສີປີມະໂລງ" ທີ່ຈັດໂດຍສຳນັກພັງສືພິມວັດຖຸບູຮານຈີນ ເຊິ່ງໄດ້ສ່ອງແສງໃຫ້ເຫັນເຖິງເນື້ອໃນວັດທະນະທຳມັງກອນຂອງຈີນ.

ບົດໂດຍ: Qin Huiying, Lu Wei